# ຢາສຳຣັບ ປິ່ນປົວໂຣກປອດແຫ້ງ

Developed by the
Minnesota Department of Health,
Tuberculosis Prevention and Control Program
January 1997 phone: (612) 676-5414

This is one in a series of four patient education pamphlets that addresses TB to be used in various clinical situations.

**Medicine for Tuberculosis Disease, Lao**

# ຢາສຳຣັບ ປິ່ນປົວໂຣກປອດແຫ້ງ

ທ່ານໝໍ ໄດ້ຂຽນໃບສັ່ງຢາ ໃຫ້ທ່ານໄປ ຮັບປະທານ, ຢານີ້ຈະ ຊ່ວຍ ຂ້າເຊື້ອໂຣກປອດແຫ້ງ ທີ່ມີ ຢູ່ໃນ ຮ່າງກາຍ ຂອງທ່ານ.

ໂຣກປອດແຫ້ງ ຈະຖືກຂ້າໄປໝົດ ໄປກໍຍ້ອນ ການຮັບປະທານ ຢາທີ່ທ່ານໝໍໄດ້ສັ່ງໃຫ້ນີ້. ແຕ່ວ່າ ເຊື້ອໂຣກປອດແຫ້ງ ອາດຈະ ແຮງ ດັ່ງນັ້ນ ທ່ານ ຕ້ອງຮັບປະທານ ຢານັ້ນໄປ ຫຼາຍເດືອນ ເພື່ອຈະໃຫ້ແນ່ ໃຈວ່າ ເຊື້ອ ໂຣກ ເຫຼົ່ານີ້ ຕາຍໝົດ ໄປແທ້ຈິງ. ຢາທີ່ຈະ ຮັບປະທານນັ້ນຕ້ອງ ແມ່ນ ທ່ານໝໍຂອງທ່ານເປັນ ຜູ້ສັ່ງອອກໃຫ້.

**ໂຣກປອດແຫ້ງ ສາມາດປິ່ນປົວ ຮັກສາໄດ້**

ຫຼັງຈາກ ທ່ານຮັບປະທານ ຢານັ້ນໄປ ປະມານ ສອງສາມ ອາທິດແລ້ວ ທ່ານອາດຈະຮູ້ສຶກ ດີຂຶ້ນ ແຕ່ວ່າ ທ່ານ ຕ້ອງຮັບ ປະທານຢານັ້ນໄປ ຈົນທ່ານ ດີໝົດແລ້ວ. ຖ້າຫາກ ທ່ານ ຢຸດ ເຊົາ ຮັບປະທານ ຢາ ນັ້ນ ໄວເກີນໄປ, ເຊື້ອ ໂຣກ ນັ້ນອາດຈະຍັງບໍ່ທັນ ຕາຍ ໝົດເທື່ອ ແລະ ມັນກໍຈະກັບເກີດ ຄືນມາ ເປັນອີກ ແລະ ອາດ ເປັນແຮງກວ່າເກົ່າ. ແລະ ທ່ານ ກໍ ອາດ ຈະໄດ້ ຮັບປະທານ ຢາ ທີ່ແຮງ ກວ່າ ນີ້ ເພື່ອຈະ ຂ້າ ເຊື້ອໂຣກ ນັ້ນ ໄດ້.

**ຮັບປະທານຢາ ຂອງທ່ານໃຫ້ໝົດ!**

ຢາ ສຳຣັບ ປິ່ນປົວ ໂຣກປອດແຫ້ງນັ້ນ ຕາມປົກກະຕິ ແມ່ນປອດ ພັຍທີ່ສຸດ, ບາງເທື່ອ ມັນກໍອາດຈະ ເກີດມີ ປະຕິກິຣິຍາ ບາງຢ່າງ ເກີດຂຶ້ນ. ຖ້າຫາກທ່ານມີ ອາການ ດັ່ງຕໍ່ໄປນີ້ເກີດຂຶ້ນ, ຕ້ອງ ໂທຣສັບ ໄປຫາ ທ່ານໝໍ ຂອງທ່ານໂດຍດ່ວນ:

- ບໍ່ຄືດ ຢາກຈະຮັບປະທານ ອາຫານ
- ຮາກ
- ເຈັບ ທີ່ ທ້ອງນ້ອຍ
- ວິນຫົວ, ວິ່ງວຽນ
- ຕາເຫຼືອງແລະ ຜິວໜັງເຫຼືອງ
- ສຽວທີ່ນີ້ວຕີນ ແລະ ນີ້ວມື
- ສຽວ ຫຼື ຮູ້ສຶກ ມືນ ໃນບໍຣິເວນປາກ
- ມົວຕາ ຫຼື ລາຍຕາ ຜິດປົກກະຕິ
- ມີສຽງກ້ອງດັງ ໃນຫູ
- ຫູອື້ງ ຫຼື ບໍ່ໄດ້ຍິນສຽງ ແຈ້ງ
- ວິນ
- ປວດ ທີ່ຂໍ່ກະດູກ
- ເປັນໄຂ້ ດົນກວ່າ ສອງ ສາມວັນ
- ເປັນຜື່ນແດງ ທີ່ຜິວໜັງ
- ເລືອດອອກ ງ່າຍໆ
- ຟົກຊ້ຳງ່າຍໆ

ທ່ານໝໍຂອງທ່ານໄດ້ສັ່ງຢາໃຫ້ທ່ານໄປໃຊ້ນັ້ນມີຄືດັ່ງນີ້:

**_____Isoniazid (INH)**

**_____Rifampin***

**_____Pyrazinamide (PZA)**

**_____Ethambutol**

**_____Streptomycin**

(ຢາ ສເຕັບໂຕມີນຊິນ ເປັນຢາສັກ)



ທ່ານຄວນລະມັດລະວັງ ເອົາໃຈໃສ່ກັບອາການ ທີ່ຈະອາດເກີດ ຂື້ນຍ້ອນໃຊ້ ຢາ ຣິແຟມພິນ ນີ້ມີຄື:

- ນ້ຳປັດສະວະ, ນ້ຳເຫື່ອ, ຫຼື ນ້ຳຕາ ອາດຈະກາຍ ເປັນສີນ້ຳ ໝາກກ້ຽງ, ນ້ຳຢາລ້າງ ຄອນແທັກແລັ້ນ ນັ້ນອາດ ຈະຖືກ
- ຜິວໜັງ ຂອງທ່ານ ອາດບໍ່ສາມາດຈະ ຮັບແສງແດດ ໄດ້, ຈຶ່ງໄຊ້ຄຣີມທາ ກັນແສງແດດ ເພື່ອຊ່ວຍປ້ອງກັນ.
- ຢາທີ່ຮັບປະທານ ຄຸມກຳເນີດ ຫຼື ຢາຊະນິດ ທີ່ເປັນເຂັມຝັງ ຄຸມກຳເນີດ ນັ້ນອາດຈະບໍ່ມີປະ ສິດທິພາບ ດີເທົ່າທີ່ຄວນ ໃນເມື່ອ ທ່ານໃຊ້ຢາຣິແຟມ ພິນ rifampin ນີ້. ຜູ້ຍິງ ທີ່ໃຊ້ຢາ ຣິແຟມພິນ rifampin ນີ້ ຄວນໃຊ້ ວິທີ ຄຸມກຳເນີດແບບອື່ນ.



ທ່ານຕ້ອງ ບອກໃຫ້ ທ່ານໝໍ ຂອງທ່ານ ຮູ້ນຳ ຢາທຸກໆ ຊະນິດພ້ອມດ້ວຍຢາແຜນໂບຮານ ທີ່ທ່ານ ກຳລັງ ໃຊ້ ຢູ່ໃນປະຈຸບັນນີ້.

ຕ້ອງບອກໃຫ້ ທ່ານໝໍ ຮູ້ນຳອີກ ຖ້າຫາກວ່າ ທ່ານກຳລັງຕັ້ງທ້ອງ ຫຼື ໃຫ້ລູກກິນນົມ ຂອງທ່ານ.

ທ່ານອາດຈະບໍ່ໄດ້ ເສັຍຄ່າ ຢາ ສຳຣັບໃຊ້ປິ່ນປົວ ໂຣກປອດແຫ້ງ ຂອງທ່ານນີ້ແຕ່ຢ່າງໃດ ຈຶ່ງບອກ ໃຫ້ທ່ານໝໍຂອງ ທ່ານຕິດຕໍ່ໄປຫາ ຜະແນກ ສາທາຣະນະສຸກ ປະຈຳເມືອງ ມິນນີອາໂປລີສ (Minnesota Department of Health) ເພື່ອຂໍເອົາ ຢານີ້ມາປິ່ນປົວທ່ານ ເລກໂທຣສັບ (612) 676-5414.